Food and Agriculture
Organization of the
United Nations

# ການຊຸກຍູ້ການລົງທຶນໃນຂະແໜງ ກະສິກຳ ແລະ ລະບົບສະບຽງອາ ຫານ ແບບມີຄວາມຮັບຜິດຊອບ ໃນ ສປປ ລາວ:

## ປະສົບການ ແລະ ເລື່ອງເລົ່າ ຄວາມສຳເລັດ ຈາກ ພະນັກງານລັດ



# ເປັນຫຍັງ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ຈຶ່ງສຳຄັນຢູ່ໃນ ສປປ ລາວ?

ກະສິກຳ ແລະ ປ່າໄມ້ ແມ່ນພື້ນຖານອັນສຳຄັນຂອງຍຸດທະສາດການພັດທະນາຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ), ທີ່ນຳໃຊ້ແຮງງານຫຼາຍກວ່າ 60% ຂອງປະຊາກອນ (ILO, 2022). ເຖິງຢ່າງໃດກໍ່ຕາມ ຂະແໜງກະສິກຳ ກໍ່ຍັງກວມເອົາພຽງ ແຕ່ 16% ຂອງ GDP ຂອງປະເທດເທົ່ານັ້ນ ເນື່ອງຈາກຄວາມສາມາດໃນຜະລິດທີ່ຕ່ຳ ແລະ ຂາດເຕັກນິກວິຊາການທີ່ທັນສະໄໝ (ທະນາຄານໂລກ, 2022). ປະຊາກອນຜູ້ສູງອາຍຸແມ່ນກຸ່ມແຮງງານຫຼັກຂອງຂະແໜງກະສິກຳເນື່ອງຈາກມີການຍົກຍ້າຍຂອງໄວໜຸ່ມເພື່ອຊອກສະແຫວງຫາໂອກາດເພື່ອສ້າງອະນາຄົດທີ່ດີກວ່າ. ຄວາມທຸກຍາກຢ່າງຕໍ່ເນື່ອງ, ຄວາມບໍ່ໝັ້ນຄົງ ທາງດ້ານສະບຽງອາຫານ ແລະ ການຂາດໂອກາດ ຂອງປະຊາກອນໃນເຂດຊົນນະບົດ ແມ່ນມີຄວາມສຳຄັນຢ່າງຍິ່ງຕໍ່ການຕັດສິນໃຈຂອງພວກເຂົາ. ເພື່ອຕ້ານກັບທ່າອ່ຽງດັ່ງກ່າວ, ການລົງທຶນຂອງທັງພາກເອກະຊົນ ແລະ ລັດຖະບານ ຈຶ່ງມີຄວາມຈຳເປັນເພື່ອຍົກສູງສະມັດຕະພາບການຜະລິດ ແລະ ລາຍຮັບຈາກກະສິກຳ. ເພື່ອບັນລຸ 2 ເປົ້າໝາຍທຳອິດຂອງ ການພັດທະນາແບບຍືນຍົງ (SDGs) ໃນການຢຸດຕິຄວາມທຸກຍາກ ແລະ ໄພອຶດຫິວ ແລະ ການປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ ໃນ ສປປ ລາວ ໃນປີ 2030 ແມ່ນຮຽກຮ້ອງໃຫ້ມີການລົງທຶນເພີ່ມເຕີມອີກ 34 ລ້ານ ໂດລາສະຫະລັດຕໍ່ປີ ໂດຍແນ່ໃສ່ຂະແໜງກະສິກຳ (FAO, IFAD ແລະ WFP, 2015).

## ສະພາບແວດລ້ອມຂອງການລົງທຶນໃນ ສປປ ລາວ

ການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ ທີ່ໄດ້ຮັບການຮັບຮອງຢ່າງເປັນທາງການ ຕາມເນື້ອທີ່ດິນ ທີ່ໄດ້ຮັບອະນຸມັດໃນ ສປປ ລາວ ແມ່ນກວມເອົາ 593,357 ເຮັກຕາ ຫຼື 15,6% ຂອງເນື້ອທີ່ປູກຝັງ ໃນ ປີ 2017 (Hett et al., 2020). ເນື່ອງຈາກທີ່ດິນຖືກຄອບຄອງໂດຍນັກລົງທຶນເປັນສ່ວນໃຫຍ່ ດັ່ງນັ້ນ, ພວກເຂົາຈຶ່ງກວມເອົາອັດຕາສ່ວນ ຂອງກຳລັງການການຜະລິດທີ່ສຳຄັນໃນປະເທດ.ຍ້ອນປະຊາກອນລາວສ່ວນໃຫ່ຍອາໄສຢູ່ເຂດຊົນນະບົດ, ການລົງທຶນສ່ວນຫຼາຍກໍ່ເກີດຂຶ້ນຢູ່ເຂດນັ້ນ, ເຊິ່ງເຮັດໃຫ້ມີຄວາມຕ້ອງການໃນການເພີ່ມປະສິດທິຜົນ ແລະ ປະສິດທິພາບຂອງການລົງທຶນເຫຼົ່ານັ້ນ.

ໃນຕົ້ນປີ 2000 ໄດ້ປະກົດວ່າ ມີການລົງທຶນຂະໜາດໃຫຍ່ຫຼາຍແຫ່ງທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງປະເທດ ແລະ ສົ່ງຜົນກະທົບໃນທາງລົບ ຕໍ່ກັບຊີວິດການເປັນຢູ່, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສິ່ງແວດລ້ອມ. ການອອກນະໂຍບາຍແມ່ນນັບມື້ນັບສຸມໃສ່ການພັດທະນາແບບຍືນຍົງ, ແນວໂນ້ມການລົງທຶນທີ່ບໍ່ສອດຄ່ອງເຫຼົ່ານີ້ແມ່ນບໍ່ເໝາະສົມກັບເປົ້າໝາຍການພັດທະນາແຫ່ງຊາດ. ເນື່ອງຈາກການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ມີ ຫຼາຍປະເພດ, ແລະ ປະຕິບັດຮ່ວມກັບຫຼາຍກະຊວງ, ໃນລະດັບບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງ ດັ່ງນັ້ນການແກ້ໄຂສະພາບການແມ່ນຈຳເປັນຕ້ອງເຮັດຢ່າງຮັດກຸມ.

## ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານແບບມີຄວາມຮັບຜິດຊອບ (RAI)ແມ່ນຫຍັງ?

ການເຄື່ອນໄຫວຂອງອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (FAO) ປະຈຳຢູ່ ສປປລາວແມ່ນສ່ວນໜຶ່ງຂອງຄວາມພະຍາຍາມລະດັບໂລກໃນວົງກວ້າງເພື່ອຈັດວາງການລົງທຶນໃນຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງໃຫ້ສອດຄ່ອງກັບຫຼັກການລົງທຶນໃນຂະແໜງກະສິກຳແລະລະບົບສະບຽງອາຫານແບບມີ ຄວາມຮັບຜິດຊອບ (CFS-RAI Principles) ທີ່ໄດ້ຮັບການຮັບຮອງ ໂດຍຄະນະກຳມະການຄວາມປອດໄພດ້ານອາຫານໂລກ. ບົດແນະນຳ ຂອງອາຊຽນວ່າດ້ວຍການສົ່ງເສີມການລົງທຶນແບບມີຄວາມຮັບຜິດຊອບໃນຂະແໜງສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (ASEAN RAI) ແມ່ນອີງໃສ່ຫຼັກການ CFS-RAI ແລະ ສະທ້ອນໃຫ້ເຫັນເຖິງຈຸດພິເສດແລະຄຸນລັກສະນະສະເພາະຂອງປະເທດສະມາຊິກອາຊຽນ.10ຄຳແນະນຳຂອງ ASEAN-RAIແມ່ນແນໃສ່ຊຸກຍູ້ການເພີ່ມທະວີການລົງທຶນດ້ານສະບຽງ ອາຫານ, ກະສິກຳ ແລະ ປ່າໄມ້ທີ່ມີຄວາມຍືນຍົງແລະການມີສ່ວນຮ່ວມທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ. ການລົງທຶນ "ແບບມີຄວາມຮັບຜິດຊອບ" ຄວນປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດຂອງພາກພື້ນ, ການຄ້ຳປະກັນ ດ້ານສະບຽງອາຫານ ແລະ ໂພຊະນາການ, ຄວາມປອດໄພ ດ້ານສະບຽງອາຫານແລະຜົນປະໂຫຍດທີ່ສະເໝີພາບ,ລວມທັງການນຳໃຊ້ຊັບພະຍາກອນທຳມະຊາດຢ່າງຍືນຍົງ.

ຫຼັກການ CFS-RAI ສາມາດຖືເປັນການຕໍ່ຍອດການຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງ (SDGs), ສະນັ້ນ ການສົ່ງເສີມການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ໃນ ສປປ ລາວ ຈຶ່ງເປັນເສັ້ນທາງກ້າວໄປສູ່ການບັນລຸເປົ້າໝາຍ SDGs ເຊັ່ນກັນ.

# ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການລົງທຶນໃນຂະແໜງກະສິກຳ ແບບມີຄວາມຮັບຜິດຊອບ ໃນ ສປປ ລາວ

ໜ້າທີ່ໃນການເຊື່ອມສານຫຼັກການ ການລົງທຶນ ໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບມາຜັນຂະຫຍາຍເປັນກະແສຫຼັກເຂົ້າໃນຂອບເຂດທົ່ວປະເທດນັ້ນຕ້ອງອາໄສການຮ່ວມມືຢ່າງຕັ້ງໜ້າຂອງລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມ ງານດ້ານການພັດທະນາ. ຂົງເຂດວຽກງານທີ່ສຳຄັນ ຂອງ ອົງການ FAO ໃນການເສີມຂະຫຍາຍສະພາບແວດລ້ອມທີ່ ອຳນວຍຄວາມສະດວກຕໍ່ການລົງທຶນໃນຂະແໜງກະສິກຳແບບມີຄວາມຮັບຜິດຊອບ ແມ່ນການສ້າງຄວາມຮັບຮູ້ເພີ່ມຂຶ້ນ ແລະ ການຝຶກອົບຮົມທີ່ກຳນົດເປົ້າໝາຍ ຕາມຄວາມຕ້ອງການດ້ານຄວາມສາມາດ ແລະ ການສົ່ງເສີມການມີສ່ວນຮ່ວມ ແລະ ການປຶກສາຫາລື ລະຫວ່າງ ຜູ້ມີສ່ວນຮ່ວມຈາກຫຼາຍຂະແໜງການ.

ສະພາບແວດລ້ອມທີ່ເອື້ອອຳນວຍ, ເຊັ່ນ: ກອບໂຄງສ້າງທາງດ້ານສະຖາບັນ, ກົດໝາຍ, ນະໂຍບາຍ ແລະ ສິ່ງຈູງໃຈ ທີ່ມີການປະສົມປະສານກັນເປັນໜຶ່ງໃນປັດໄຈຕົ້ນຕໍທີ່ກຳນົດປະລິມານ ແລະ ຜົນໄດ້ຮັບຂອງການລົງທຶນ. ບັນດານະໂຍບາຍ, ກົດຫມາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບຂະແໜງກະສິກຳ ແລະ ລະບົບສະບຽງອາຫານຈຳເປັນຕ້ອງມີຄວາມເຊື່ອມໂຍງ, ສອດຄ່ອງ ແລະ ສາມາດຄາດການໄດ້. ແຕ່ລະປະເທດຕ້ອງມີວິທີການທີ່ເໝາະສົມ; ດ້ວຍເຫດນີ້, ກິດຈະກຳຕ່າງໆ ໃນ ສປປ ລາວ ຈຶ່ງເລີ່ມຕົ້ນດ້ວຍການຈັດກອງປະຊຸມປະເມີນຄວາມອາດສາມາດ ເພື່ອທຳຄວາມເຂົ້າໃຈກ່ຽວກັບ ຂອບເຂດນະໂຍບາຍ, ກົດໝາຍ, ແຜນການ ແລະ ຍຸດທະສາດ ທີ່ມີຢູ່ ແລະ ກຳລັງຈັດຕັ້ງປະຕິບັດໃນ ສປປ ລາວ ໃນການສົ່ງເສີມສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ແລະ ແມ່ນຫຍັງທີ່ເປັນຄວາມຕ້ອງການຫຼັກ ໃນດ້ານການຮຽນຮູ້ສຳລັບອົງການຕ່າງໆຂອງລັດຖະບານ.

ໂດຍອີງໃສ່ບູລິມະສິດທີ່ໄດ້ກຳນົດໄວ້, ໂຄງການການຮຽນຮູ້ທີ່ມີຫົວຂໍ້ວ່າ "ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນໃນການລົງທຶນໃນຂະແໜງກະສິກຳ" ທີ່ແນໃສ່ຜູ້ຕາງໜ້າຈາກໜ່ວຍງານໃນຂັ້ນເມືອງ(ທີ່ເຮັດວຽກກ່ຽວກັບການວາງແຜນ, ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຍຸດຕິທຳ) ໄດ້ຮັບການອອກແບບ ແລະ ຈັດຕັ້ງປະ ຕິ ບັດຮ່ວມກັນ ອົງການ Helvetas ໂດຍໄດ້ຮັບການສະໜັບສະໜູນ ຈາກພະນັກງານຂັ້ນແຂວງ.

ຫຼັງຈາກໂຄງການການຮຽນຮູ້, ໄດ້ມີການຈັດ ກອງປະຊຸມສຳມະນາອອນໄລນ໌ ສຳລັບອົງການຈັດຕັ້ງທາງສັງຄົມ ເພື່ອປຶກສາຫາລື ແລະ ຕົກລົງ ກ່ຽວກັບບົດຮຽນທີ່ຖອດຖອນໄດ້, ຜົນສຳເລັດ, ສິ່ງທ້າທາຍ ແລະ ບູລິມະສິດຂອງວຽກງານ ທີ່ກ່ຽວຂ້ອງກັບການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ໃນຕໍ່ໜ້າ. ຜົນຂອງການສຳຫຼວດປີ 2021 ເພື່ອ ວັດແທກຄວາມຮັບຮູ້ໃນປັດຈຸບັນກ່ຽວກັບການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ໃນ ສປປ ລາວ ໄດ້ຖືກນຳສະເໜີໃນກອງປະຊຸມປຶກສາຫາລືຫຼາຍຝ່າຍ ກ່ຽວກັບ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານແບບມີຄວາມຮັບຜິດຊອບ ປີ 2021, ເຊິ່ງໄດ້ ເຕົ້າໂຮມຜູ້ມີສ່ວນກ່ຽວຂ້ອງຫຼາຍກວ່າ 150 ຄົນ. ການສຳຫຼວດດັ່ງກ່າວຖືກຈັດຂຶ້ນ ໂດຍ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ, ອົງການ FAO, ອົງການ GIZ ແລະ ໂຄງການຄຸ້ມຄອງທີ່ດິນໃນພາກພື້ນແມ່ນ້ຳຂອງ.

[1] ມີອົງການຈັດຕັ້ງທາງສັງຄົມ ຫຼາຍອົງການເຂົ້າຮ່ວມເຊັ່ນ: ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (ສກສຍ/SAEDA), ສະມາຄົມລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ (ສພຊບ), ສະມາຄົມ ສົ່ງເສີມຄວາມຮູ້ກ່ຽວກັບການຄົ້ນຄວ້າ ແລະ ພັດທະນາຊົນນະບົດ (ສສຄພຊ), ບໍລິສັດ ຄຣິກ ໃຫ້ຄຳປຶກສາດ້ານການພັດທະນາກະສິກຳ ແລະ ຊົນນະບົດ, ເຄືອຂ່າຍຊາວກະສິກອນ, ແລະ ສອງອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ ຄື ອົງການບ້ານຈຸດສຸມສາກົນ ແລະ ອົງການອັອກຟາມ, ແມ່ນມີບົດບາດສຳຄັນໃນຂະບວນການນີ້.

# ຄວາມຮັບຮູ້ຂອງຜູ້ມີສ່ວນຮ່ວມ ກ່ຽວກັບການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ: ຜົນໄດ້ຮັບຈາກການສຳຫຼວດໃນປີ 2021 ທີ່ມີຜູ້ຕອບແບບສອບຖາມຈຳນວນ 382 ຄົນ

5 ປະເດັນ ຫຼື ບັນຫາຫຼັກ ກ່ຽວກັບ RAI ຢູ່ລາວ ໃນປະຈຸບັນ ມີຫຍັງແດ່?




ແຫຼ່ງທີ່ມາ: ການລົງທຶນທີ່ມີຄວາມຮັບຜິດຊອບໃນລະບົບກະສິກຳ ແລະ ສະບຽງອາຫານ (RAI) ໃນ ສປປ ລາວ - ການສຳຫຼວດ 2021, ອົງການ FAO

ຄຳຕອບແບບສຳຫຼວດສູງສຸດ ກ່ຽວກັບວິທີການປັບປຸງ RAI ໃນ ສປປ ລາວ

- ນະໂຍບາຍບຸລິມະສິດ ແລະ ແຮງຈູງໃຈ ເພື່ອສົ່ງເສີມ RAI
- ສ້າງຄວາມກະຈ່າງແຈ້ງ ກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບ ໃນການປະຕິບັດກົດໝາຍແລະລະບຽບການ
- ການຕິດຕາມໂຄງການລົງທຶນ ໂດຍສະເພາະບັນຫາສິ່ງແວດລ້ອມ
- ສ້າງຄວາມໂປ່ງໃສຫຼາຍຂຶ້ນໃນການຕັດສິນໃຈຂອງລັດຖະບານ

## ການປົກຄອງ

- ທົບທວນ ແລະ ປັບປຸງກອບກົດໝາຍ
- ການປະກອບ ກົນໄກ ສະຖາບັນ ແລະ ງົບປະມານໃຫ້ແກ່ການປະຕິບັດ
- ກົນໄກການຕິດຕາມ ແລະ ປະເມີນຜົນ ແລະ ຖານຂໍ້ມູນເພື່ອແກ້ໄຂຂໍ້ຂັດແຍ່ງ ແລະ ຄວາມໂປ່ງໃສ
- ສ້າງຄວາມເຂັ້ມແຂງ ແລະ ປູກຈິດສຳນຶກ ກ່ຽວກັບ RAI ໃຫ້ເໝາະກັບສະພາບຕົວຈິງ

ການແກ້ໄຂການສົນທະນາຂອງຜູ້ມີສ່ວນກ່ຽວຂ້ອງຫຼາຍຝ່າຍເພື່ອກ້າວສູ່ RAI

ໃນການກ່າວຄຳເຫັນໃນກອງປະຊຸມປຶກສາຫາລືຫຼາຍຝ່າຍລະດັບຊາດໃນ ປີ 2021, ທ່ານ ວິໄລຮັກ ຈັນທະລາດ, ຮອງຫົວໜ້າພະແນກຄຸ້ມຄອງ ການລົງທຶນ, ກົມແຜນການ ແລະ ການຮ່ວມມື (DoPC), ກະຊວງກະສິກຳ ແລະ ປ່າໄມ້, ໄດ້ຢ້ຳຄືນເຖິງຄວາມສຳຄັນຂອງ ວຽກງານ ທີ່ ອົງການ FAO ແລະ ກົມແຜນການ ແລະ ການຮ່ວມມື (DoPC) ທີ່ໄດ້ຮ່ວມມືກັນ. ການປັບປຸງ ການປະສານງານລະຫວ່າງ ອົງການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍຍົກສູງຄວາມຮັບຮູ້, ເຜີຍແຜ່ບັນດານະໂຍບາຍ, ກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງ ເພື່ອໃຫ້ການຈັດປະປະຕິບັດເປັນໄປຕາມກອບນະໂຍບາຍ, ກົດໝາຍ ແລະ ນິຕິກຳທີ່ມີຢູ່ ຢ່າງສອດຄ່ອງ. ທ່ານຍັງໄດ້ກ່າວເຖິງ ຄວາມສຳຄັນ ຂອງການປະສານງານຫຼາຍຂະແໜງການ ແລະ ການຮ່ວມມືພາຍໃນ ແລະ ລະຫວ່າງ ບັນດາກະຊວງ ແລະ ລະຫວ່າງການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ.. .





# ການສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານຕ່າງໆ ທີ່ສຳຄັນ ເພື່ອສ້າງຄວາມປ່ຽນແປງ

ແນວທາງ ຂອງ ອົງການ FAO ໃນການສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃນການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ແມ່ນສຸມໃສ່ ການເສີມສ້າງຄວາມສາມາດດ້ານຍຸດທະສາດ. ໂດຍອີງໃສ່ບົດບາດຂອງບັນດາເຈົ້າໜ້າທີ່ ແລະ ພະນັກງານວິຊາການຂອງພາກລັດ ໃນການປະຕິບັດ ນະໂຍບາຍ ແລະ ລະບຽບການ, ບັນດາເຈົ້າໜ້າທີ່ ແລະ ພະນັກງານວິຊາການຂອງພາກລັດ, ພວກເຂົາແມ່ນເປັນເຈົ້າການໃນການຊີ້ນຳນຳພາ ໃນການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ແລະ ນຳພາໃຫ້ເກີດມີການປ່ຽນແປງ. ໃນໜ້າຕໍ່ໄປ ທ່ານ ສຸວັນທອງ ນາມວົງ ແລະ ນາງ ແສງມາໄລພອນ ໂພທິສານ ຜູ້ເຂົ້າຮ່ວມໂຄງການຮຽນຮູ້ ຂອງອົງການ FAO ໄດ້ເວົ້າເຖິງປະສົບການຂອງພວກເຂົາໃນ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ, ລວມທັງ ວິທີການແກ້ໄຂບັນຫາໃນຊຸມປີທີ່ຜ່ານມາ, ຄວາມຄືບໜ້າ ແລະ ສິ່ງທ້າທາຍ ທີ່ຍັງມີຢູ່ຕໍ່ໜ້າ.

©FAO/Xaykhame Manilasith

# ທ່ານ ສຸວັນທອງ ນາມວົງ, ຜູ້ມີປະສົບການໃນການຈັດຕັ້ງປະຕິບັດການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະ ບຽງອາຫານ ແບບມີຄວາມຮັບຜິດຊອບ ໃນ ສປປ ລາວ.

ທ່ານ ສຸວັນທອງ ນາມວົງ ໄດ້ມີສ່ວນຮ່ວມໃນກິດຈະ ກຳຕ່າງໆຂອງ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ພາຍໃຕ້ການສະໜັບສະໜູນ ຂອງ ອົງການ FAO ໃນຖານະຜູ້ອຳນວຍຄວາມສະດວກ ແລະ ຄະນະກຳມະການ. ໃນຖານະເປັນຮອງຫົວໜ້າພະແນກສົ່ງເສີມຂໍ້ມູນຂ່າວສານ ແລະ ການຮ່ວມມືທາງການຕະຫຼາດ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້, ເພິ່ນເປັນຜູ້ຊ່ຽວຊານທາງດ້ານການຝຶກອົບຮົມວິຊາການ, ການເຕີບໂຕສີຂຽວ, ການສ້າງຄວາມສາມາດ, ການຮັບມືກັບສະພາບອາກາດ ແລະ ທຸລະກິດກະສິກຳ.

ທ່ານ ສຸວັນທອງ ນາມວົງ ໄດ້ເຂົ້າຮ່ວມໃນການຈັດຕັ້ງປະຕິບັດການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານແບບມີຄວາມຮັບຜິດຊອບ ເປັນເວລາສິບກວ່າປີ ແລະ ໄດ້ສັງເກດເຫັນຄວາມສຳຄັນ ຂອງ ຫຼັກການການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບຢ່າງເປັນປະຈຳ, ເຊິ່ງຖືເປັນພື້ນຖານອັນສຳຄັນໃນການພັດທະນາຊົນນະບົດແບບຍືນຍົງ. ດ້ວຍເຫດນີ້, ເພິ່ນຈຶ່ງຮູ້ສຶກກັງວົນ ແລະ ເປັນຫ່ວງ ຕໍ່ກັບລະດັບຄວາມຮັບຮູ້ທາງດ້ານນິຕິກຳ ແລະ ຂັ້ນຕອນ ຂອງ ພະນັກງານລັດຖະກອນ ຜູ້ທີ່ມີສ່ວນຮ່ວມໃນຂະບວນການລົງທຶນກະສິກຳທີ່ບໍ່ພຽງພໍ.

ທ່ານ ສຸວັນທອງ ນາມວົງ ກ່າວວ່າ "ຂ້າພະເຈົ້າໄດ້ຍິນວ່າເຈົ້າໜ້າທີ່ຂັ້ນແຂວງ ຫຼື ຂັ້ນເມືອງບາງຄົນໄດ້ໃຊ້ເວລາດຳເນີນເອກະສານການລົງທຶນພຽງບໍ່ເທົ່າໃດມື້, ແຕ່ການກວດກາລາຍລະອຽດທັງໝົດຄວນໃຊ້ເວລາດົນກວ່ານັ້ນ, ໂດຍສະເພາະແມ່ນການກວດກາຂອງຂະແໜງທີ່ດິນຂັ້ນເມືອງ"

ພາຍໃຕ້ໂຄງການການຮຽນຮູ້, ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຂັ້ນຕອນທີ່ມີຄວາມຈຳເປັນໃນການຕິດຕາມ-ກວດກາ ແລະ ການກວດສອບເອກະສານຢ່າງເປັນລະບົບ ໂດຍອີງໃສ່ເງື່ອນໄຂລະບຽບການ ແລະ ສະພາບການຕົວຈິງໃນພື້ນທີ່. ລວມທັງການເຫັນດີຢ່າງມີອິດສະຫຼະ ໂດຍໄດ້ຮັບຂໍ້ມູນລ່ວງໜ້າຢ່າງພຽງພໍ (FPIC), ເຊິ່ງເປັນຂັ້ນຕອນທີ່ຊ່ວຍສ້າງຄວາມໝັ້ນໃຈໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອ ໃຫ້ສາມາດຕັດສິນໃຈຢ່າງມີຂໍ້ມູນ ວ່າຈະເຫັນດີ ຫຼື ບໍ່ເຫັນດີ ຕໍ່ຂໍ້ສະເໜີການລົງທຶນ.

## ສາມຝ່າຍທີ່ເປັນຜູ້ຊະນະ,ສາມພາລະບົດບາດທີ່ຕ້ອງເຮັດ

ທ່ານ ສຸວັນທອງ ນາມວົງ ຊີ້ໃຫ້ເຫັນວ່າ: ໃນໂລກແຫ່ງການລົງທຶນໃນຂະແໜງກະສິກຳ ນັກລົງທຶນຈະສຸມໃສ່ການສ້າງກຳໄລ ສະນັ້ນມັນຈຶ່ງເປັນໜ້າທີ່ຂອງລັດຖະບານໃນການຄຸ້ມຄອງ ແລະ ຮັບປະກັນຄວາມປອດໄພ ເພື່ອປະໂຫຍດຂອງສ່ວນລວມ ແລະ ປະຊາຊົນ.



©FAO

“ເນື່ອງຈາກ, ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບເປັນແນວຄວາມຄິດໃຫມ່ ສໍາລັບ ການປົກຄອງທ້ອງຖິ່ນ, ຄວາມເຂົ້າໃຈຂອງພວກເຂົາຈຶ່ງມີຈໍາກັດ, ແລະ ບັນຫາ ແລະ ຄວາມທ້າທາຍກໍ່ຈະຍັງປະກົດຢູ່ ຈົນກວ່າຄວາມສາມາດໃນການຄຸ້ມຄອງຂະບວນ ການລົງທຶນຂອງພວກເຂົາ ຈະໄດ້ຮັບການປັບປຸງ”

ທ່ານ ສຸວັນທອງ ນາມວົງ ຮັບຮູ້ວ່າ ການສ້າງຄວາມອາດສາມາດ ແລະ ການນໍາເອົາຫຼັກການ ການລົງທຶນໃນຂະແໜງກະສິກໍາ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ໄປນໍາໃຊ້ໃນລະດັບທ້ອງຖິ່ນ ສາມາດສົ່ງຜົນໃນການທໍາລາຍວົງຈອນຂອງການລົງທຶນທີ່ມີຜົນໄດ້ຮັບຕໍ່າ. ພວກເຮົາກໍາລັງພະຍາຍາມພັກດັນ ເພື່ອໃຫ້ ສາມພາກສ່ວນກ່ຽວຂ້ອງຫຼັກ-ລັດຖະບານ, ນັກລົງທຶນເອກະຊົນ ແລະ ຊຸມຊົນໄດ້ຮັບໄຊຊະນະ ຈາກການລົງທຶນ ໄປພ້ອມໆກັນ ແບບ “ຊະນະ-ຊະນະ-ຊະນະ” ທັງສາມຝ່າຍ.

ໃນໂຄງການຮຽນຮູ້, ທ່ານ ສຸວັນທອງ ນາມວົງ ໄດ້ກ່າວຄໍາເຫັນວ່າ: “ການສ້າງຂີດຄວາມສາມາດ ທີ່ພວກ ເຮົາກໍາລັງເຮັດ ໃນປະຈຸບັນແມ່ນມີຄວາມສໍາຄັນ ໃນການຊ່ວຍໃຫ້ລັດຖະບານປະຕິບັດໜ້າທີ່ຂອງຕົນ. ການສະໜັບສະໜູນ ທີ່ຮັບການຊ່ວຍເຫຼືອຈາກ ອົງການ FAO ແລະ ອົງການອື່ນໆ ໃນຮູບແບບນີ້ ສາມາດຊ່ວຍເສີມສ້າງຄວາມເປັນເຈົ້າການ ຂອງລັດຖະບານ ກ່ຽວກັບ ຫຼັກການການລົງທຶນໃນຂະແໜງກະສິກໍາ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ.” ໂຄງການການຮຽນຮູ້ໄດ້ສົມທົບກັບພະນັກງານລັດ ແຕ່ຂັ້ນສູນກາງ ຈົນຮອດ ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອອໍານວຍ ຄວາມສະດວກໃນການແລກປ່ຽນ ແລະ ເສີມຂະຫຍາຍ ປະສົບການໃນການຮຽນຮູ້.

## ການເຊື່ອມຈອດ ຊ່ອງຫວ່າງ ແລະ ການເຊື່ອມຕໍ່ຈຸດຕ່າງໆ

ກອບກົດໝາຍ ແລະ ນະໂຍບາຍ ຂອງ ສປປ ລາວ ກ່ຽວກັບການສົ່ງເສີມການລົງທຶນ ແມ່ນໄດ້ຮັບຄວາມສົນໃຈຫຼາຍ ໃນຊຸມປີທີ່ຜ່ານມານີ້. ໃນຂະນະທີ່ຫຼາຍໆຄົນເຫັນດີວ່າ ກອບນິຕິກໍາ ປະກອບດ້ວຍ ອົງປະກອບທີ່ສໍາຄັນຕ່າງໆ, ແຕ່ກໍ່ຍັງ ມີອີກຫຼາຍໜ້າວຽກທີ່ຈະຕ້ອງເຮັດ ໃນການເຜີຍແຜ່ ແລະ ການປະຕິບັດຕົວຈິງໃນພາກສະໜາມ. ທ່ານ ສຸວັນທອງ ນາມວົງ ໄດ້ຍົກຕົວຢ່າງ ກອບກົດໝາຍທີ່ກ່ຽວກັບການປົກປ້ອງທາງສັງຄົມ ແລະ ສິ່ງແວດລ້ອມ ໂດຍໃຫ້ຂໍ້ສັງເກດວ່າ: “ເຖິງວ່າຈະມີກອບກົດໝາຍຢູ່, ແຕ່ການປົກປ້ອງແມ່ນບໍ່ຄ່ອຍໄດ້ຮັບການປະຕິບັດຢ່າງມີປະສິດທິພາບ ເນື່ອງຈາກການເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງ ແລະ ຄວາມເຂົ້າໃຈທີ່ມີຈໍາກັດຂອງພະນັກງານປົກຄອງທ້ອງຖິ່ນ.” ເຖິງແມ່ນວ່າຂໍ້ມູນຂ່າວສານກ່ຽວກັບກອບນິຕິກໍາໃຫມ່ ໄດ້ຖືກເຜີຍແຜ່ໃຫ້ກັບທ້ອງຖິ່ນ ຜ່ານການໂຄສະນາຂອງບັນດາກະຊວງທີ່ກ່ຽວຂ້ອງ, ແຕ່ນັກລົງທຶນ ຍັງສັງເກດເຫັນວ່າ ຄວາມເຂົ້າໃຈໃນການບັງຄັບໃຊ້ກົດຫມາຍສະບັບດຽວກັນ ຍັງບໍ່ສອດຄ່ອງກັນ ລະຫວ່າງ ແຂວງໜຶ່ງ ຫຼື ເມືອງໜຶ່ງ ກັບ ແຂວງອື່ນ ຫຼື ເມືອງອື່ນ. ສິ່ງນີ້ມັກຈະເກີດຂຶ້ນໃນເວລາທີ່ ກອບນິຕິກໍາ ແລະ ຄໍາແນະນໍາໃນການຈັດຕັ້ງປະຕິບັດ ບໍ່ມີຂໍ້ມູນຕົວຈິງທີ່ພຽງພໍ.

ທ່ານ ສຸວັນທອງ ນາມວົງ ສະແດງຄວາມ ເປັນຫ່ວງ ຕໍ່ການຂາດການເຊື່ອມຕໍ່ ລະຫວ່າງ ຂັ້ນທ້ອງຖິ່ນ ແລະ ຂັ້ນສູນກາງ ເຊິ່ງຂັ້ນທ້ອງຖິ່ນຕ້ອງຮັບມືກັບສະພາບບັນຫາຕົວຈິງປະຈໍາວັນທີ່ເກີດຂຶ້ນຈາກການລົງທຶນ ແຕ່ນະໂຍບາຍ ແລະ ກອບກົດໝາຍທີ່ລັດຖະບານສູນກາງອອກ ຍັງບໍ່ສາມາດແກ້ໄຂບັນຫາໃນທ້ອງຖິ່ນໄດ້ຢ່າງພຽງພໍ. ຮູບແບບໂຄງການການຮຽນຮູ້ ໄດ້ປະກອບສ່ວນເຂົ້າໃນ ການແກ້ໄຂການຂາດການເຊື່ອມຕໍ່ນີ້ ໂດຍການໃຊ້ກໍລະນີ ການລົງທຶນໃນຂະແໜງກະສິກໍາ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ທີ່ມີໃນທ້ອງຖິ່ນຕົວຈິງ ເພື່ອໄຂຫຼັກການການລົງທຶນໃນຂະແໜງກະສິກໍາ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ຮ່ວມກັນ ລະຫວ່າງ ຂັ້ນຕ່າງໆ ຂອງລັດຖະບານ. ເມື່ອມີ ຂະບວນການເຫຼົ່ານີ້ແລ້ວ ຊ່ອງຫວ່າງ ແລະ ຄວາມບໍ່ສອດຄ່ອງ ກໍ່ສາມາດ ແກ້ໄຂໄດ້.

ເພື່ອໃຫ້ບັນລຸການປ່ຽນແປງນີ້ ທ່ານ ສຸວັນທອງ ນາມວົງ ໄດ້ກ່າວເຖິງ ຄວາມສາມາດບົ່ມຊ້ອນອັນເລິກເຊິ່ງ ຂອງໄວໜຸ່ມ. ເພິ່ນໄດ້ໃຫ້ຄໍາແນະນໍາ ແກ່ ຜູ້ປະຕິບັດການລົງທຶນໃນຂະແໜງກະສິກໍາ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ດັ່ງນີ້:

“ສິ່ງໜຶ່ງທີ່ມີຄວາມສໍາຄັນຫຼາຍໃນການສົ່ງເສີມ ການລົງທຶນໃນຂະແໜງກະສິກໍາ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ແມ່ນການຝຶກອົບຮົມໃຫ້ໄວໜຸ່ມໃຫ້ຫຼາຍຂຶ້ນ. ໄວໜຸ່ມ ມີແນວໂນ້ມ ທີ່ຈະສົ່ງຕໍ່ ຄວາມຮູ້ໄປໃຫ້ຄົນອື່ນ. ພວກເຂົາຈະສາມາດກາຍເປັນຕົວແທນຂອງການປ່ຽນແປງໄດ້, ຖ້າ ພວກເຂົາ ເຂົ້າໃຈວ່າມັນແມ່ນຫຍັງ ແລະ ມີວິທີການແນວໃດ. ຂ້າພະເຈົ້າເອງໄດ້ເຂົ້າ ຮ່ວມຫຼາຍໂຄງການທີ່ ແນໃສ່ການສ້າງຄວາມອາດສາມາດ ເພື່ອ ຊ່ວຍໃຫ້ຄົນລຸ້ນໃຫມ່ມີ ຄວາມເຂົ້າໃຈທີ່ດີຂຶ້ນ ກ່ຽວກັບ ການລົງທຶນໃນຂະແໜງກະສິກໍາ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ.

ທ່ານ ສຸວັນທອງ ເຫັນວ່າ ໄວໜຸ່ມລາວມີຄວາມກ້າວໜ້າ ແລະ ມີຄວາມຢາກເປັນຜູ້ປະກອບການ ໃນການເຮັດທຸລະກິດທີ່ກ່ຽວກັບກະສິກໍາ ຫຼາຍຂຶ້ນກວ່າເກົ່າ. ສິ່ງເຫຼົ່ານີ້ແມ່ນສິ່ງທີ່ຈໍາເປັນ ເພື່ອປັບປຸງຄຸນນະພາບ ແລະ ຄວາມທັນສະໄໝ ທີ່ຈະນໍາໄປສູ່ການພັດທະນາຊົນນະບົດແບບຍືນຍົງ ແລະ ຫຼາກຫຼາຍ. ນອກຈາກນັ້ນ, ການພັດທະນາເຫຼົ່ານີ້ຈະເປັນສິ່ງຊຸກຍູ້ໃຫ້ໄວໜຸ່ມເຮັດວຽກຢູ່ໃນຊຸມຊົນຊົນນະບົດ ແລະ ຫັນປ່ຽນທ່າອ່ຽງຂອງການເຄື່ອນຍ້າຍຈາກຊົນນະບົດເຂົ້າຫາມາຕົວເມືອງ.

## ຄຳແນະນຳ ສຳລັບບາດກ້າວຕໍ່ໄປ

ທ່ານ ສຸວັນທອງ ນາມວົງ ໄດ້ເນັ້ນໜັກໃສ່ ຄຳແນະນຳ ເລກທີ 0457/ກຊຜທ ທີ່ມີ ຫົວຂໍ້ວ່າ“ ຄຳແນະນຳ ກ່ຽວກັບການພິຈາລະນາ ອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ.” ເຊິ່ງຖືກນຳສະເຫນີໃນປີ 2019 ເພື່ອໃຊ້ເປັນເຄື່ອງມືທີ່ມີປະສິດທິພາບໃນການເຊື່ອມຈອດຊ່ອງຫວ່າງລະຫວ່າງຄວາມຮັບຮູ້ ຂອງພະນັກງານ ກ່ຽວກັບ ກອບລະບຽບການ ແລະ ຄວາມຮັບຜິດຊອບຂອງພວກເຂົາ ທີ່ກ່ຽວຂ້ອງກັບການລົງທຶນດ້ານທີ່ດິນ. ທ່ານ ສຸວັນທອງ ນາມວົງ ກ່າວວ່າ “ ຂ້າພະເຈົ້າຫວັງວ່າຄຳແນະນຳນີ້ຈະຖືກສືບຕໍ່ຈັດຕັ້ງປະຕິບັດໃນວຽກງານຕົວຈິງ. ເນື່ອງຈາກ, ມັນໃຫ້ຄຳແນະນຳ ໃນການປະຕິບັດບັນດາກົດໝາຍແຫ່ງຊາດ ແລະ ດຳລັດກ່ຽວກັບການລົງທຶນໃນຂະແໜງ ກະສິກຳ. ASEAN RAI, ຫຼັກການ CFS-RAI ແລະ VGGT [ຄຳແນະນຳ ກ່ຽວກັບ ຄວາມສະໝັກໃຈໃນການຄຸ້ມຄອງບໍລິຫານຢ່າງທີ່ມີຄວາມຮັບຜິດຊອບ] ແມ່ນຂໍ້ມູນອ້າງອີງທີ່ເປັນປະໂຫຍດຫຼາຍ, ແຕ່ມັນກໍ່ເປັນພຽງຂໍ້ແນະນຳທີ່ຍັງບໍ່ແມ່ນກົດໝາຍ ຫຼື ນະໂຍບາຍເທື່ອ. ອົງການ FAO ຄວນມີໂຄງການສົ່ງເສີມ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ໂດຍກົງກັບລັດຖະບານໃຫ້ຫຼາຍຂຶ້ນ, ໂດຍສະເພາະ ໃນລະດັບຂອດຈັດຕັ້ງປະຕິບັດ”.


©FAO

# ຜົນກະທົບທາງບວກຂອງການປັບປຸງກອບລະບຽບການ: ເລື່ອງເລົ່າຄວາມສຳເລັດ

ໜຶ່ງໃນປະສົບການທີ່ໄດ້ຖືກແບ່ງປັນໃນກອງປະຊຸມປຶກສາຫາລືຫຼາຍຝ່າຍລະດັບຊາດປີ 2021 ແມ່ນມາ ຈາກ ພະແນກແຜນການ ແລະ ການລົງທຶນແຂວງຫຼວງພະບາງ (PPI). ພະແນກແຜນການ ແລະ ການລົງທຶນແຂວງຫຼວງພະບາງ ລາຍງານວ່າມີການປະກາດນຳໃຊ້ ຄຳແນະນຳ 0457/ກຊຜທ ຂ້າງເທິງເຊິ່ງໄດ້ຊີ້ແຈງກ່ຽວກັບສະພາບແວດລ້ອມດ້ານກົດລະບຽບ, ໃຫ້ການສະໜັບສະໜູນ ແລະ ສະໜອງເຄື່ອງມືທີ່ຈຳເປັນໃນການຄຸ້ມຄອງຂະບວນການຄຸ້ມຄອງການລົງທຶນຢ່າງເປັນລະບົບຫຼາຍຂຶ້ນ. ສິ່ງສຳຄັນໄປກວ່ານັ້ນ, ຄຳແນະນຳ 0457/ກຊຜທ ກຳນົດໃຫ້ການຮັບປະກັນການຟື້ນຟູທີ່ດິນ, ການກຳຈັດສິ່ງເສດເຫຼືອ ແລະ ການຕິດຕາມກວດກາຈະຕ້ອງໃຫ້ນັກລົງທຶນເປັນຜູ້ຮັບຜິດຊອບ, ປະສານສົມທົບກັບເຄື່ອງມື ແລະ ຄວາມຮູ້ທີ່ຮຽນມາເພື່ອປູກຈິດສຳນຶກກ່ຽວກັບການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານແບບມີຄວາມຮັບຜິດຊອບ(RAI),ໄດ້ຊ່ວຍພະແນກແຜນການ ແລະ ການລົງທຶນແຂວງຫຼວງພະບາງໃນການປັບປຸງຄຸນນະພາບ ຂອງ ການລົງທຶນໃນແຂວງຫຼວງພະບາງ.

ໂດຍຜ່ານການເຈລະຈາກັບບໍລິສັດຕ່າງໆ,ທາງພະແນກແຜນການແລະການລົງທຶນແຂວງຫຼວງພະບາງໄດ້ສ້າງຂໍ້ຕົກລົງການຄຸ້ມຄອງໂຄງການຂຶ້ນ.ຂໍ້ຕົກລົງເຫຼົ່ານີ້ໄດ້ກຳນົດກົດລະບຽບ, ຄ່າທຳນຽມການຕິດຕາມ ແລະ ກວດກາທີ່ດິນຕໍ່ເຮັກຕາ, ແລະ ຄ່າທຳນຽມຊັບພະຍາກອນທຳມະຊາດ ແລະ ນໍ້າ. ເຖິງຢ່າງໃດກໍ່ຕາມ ຄ່າທຳນຽມດັ່ງກ່າວ ຕ້ອງໄດ້ແບ່ງປັນໃຫ້ແກ່ 5 ອົງການຂອງລັດທີ່ມີໜ້າທີ່ຮັບຜິດຊອບໃນການຕິດຕາມ ແລະ ກວດກາ, ເຊິ່ງງົບປະມານດັ່ງກ່າວ ສາມາດນຳໃຊ້ໃນການລົງຕິດຕາມ ພຽງແຕ່ 2 ຄັ້ງຕໍ່ປີ ຕໍ່ສວນ.

ອີງຕາມພະແນກແຜນການ ແລະ ການລົງທຶນແຂວງຫຼວງພະບາງ ໄດ້ກ່າວວ່າ, ເຖິງວ່າຈະມີຂໍ້ຈຳກັດກໍ່ຕາມ, ແຕ່ການຕິດຕາມກວດການີ້ ສົມທົບກັບການປະຕິບັດນະໂຍບາຍຜ່ານສັນຍາຄຸ້ມຄອງໂຄງການໄດ້ຊ່ວຍປັບປຸງການຈັດຕັ້ງປະຕິບັດ ຕາມມາດຕະຖານຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂດຍສະເພາະ, ຜ່ານຂະບວນການດັ່ງກ່າວ ນັກລົງທຶນຈຳນວນໜຶ່ງໄດ້ເອົາໃຈໃສ່ຍົກລະດັບສີມືແຮງງານ ແລະສະໜອງສັນຍາຈ້າງທີ່ສອດຄ່ອງກັບກົດໝາຍວ່າດ້ວຍແຮງງານ. ນອກຈາກນັ້ນການເຜີຍແຜ່ນິຕິກຳໃຫ້ແກ່ພະນັກງານພາກລັດ, ນັກລົງທຶນ ແລະ ເຈົ້າຂອງທີ່ດິນ ສາມາດນຳໄປສູ່ການມີສ່ວນຮ່ວມຂອງສາມຝ່າຍເຊິ່ງໄດ້ປັບປຸງຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການປູກຈິດສຳນຶກ ກ່ຽວກັບ ຂະບວນການອະນຸມັດການລົງທຶນ. ການພັດທະນາເຫຼົ່ານີ້ເປັນຕົວຢ່າງຂອງວິທີການປະຕິບັດກອບກົດໝາຍທີ່ມີການຕິດຕາມ ແລະ ການມີ ສ່ວນຮ່ວມ ເຊິ່ງເຮັດໃຫ້ການຄຸ້ມຄອງການລົງທຶນດ້ານກະສິກຳມີຄວາມຮັບຜິດຊອບຫຼາຍຂຶ້ນ.

ເຖິງວ່າ ຄຳແນະນຳ 0457/ກຊຜທ ຈະເປັນບາດກ້າວອັນໃຫຍ່ຫຼວງ, ແຕ່ຍັງຈຳເປັນຕ້ອງມີການປັບປຸງໃນບາງດ້ານ ທີ່ຈະຊ່ວຍໃຫ້ ການດຳເນີນງານຂອງລະບົບການຄໍ້າປະກັນດີຂຶ້ນ ເຊັ່ນ: ຄວາມສອດຄ່ອງດ້ານນິຕິກຳ-ຂໍ້ກຳນົດ, ການສ້າງກົນໄກການຮ່ວມມື ເພື່ອແບ່ງປັນຂໍ້ມູນຂ່າວສານ, ການຈັດຫາງົບປະມານເພື່ອຕິດຕາມ ແລະ ບັງຄັບໃຊ້. ນີ້ສະແດງໃຫ້ເຫັນວ່າ ການປັບປຸງກອບທາງດ້ານກົດໝາຍ ແລະ ລະບຽບການທີ່ມີຢູ່ແລ້ວ ນັ້ນ ສາມາດປັບປຸງຜົນໄດ້ຮັບເພີ່ມເຕີມໄດ້ແນວໃດ. ພະແນກແຜນການ ແລະ ການລົງທຶນແຂວງຫຼວງພະບາງ ໄດ້ແກ້ໄຂຄວາມບໍ່ແນ່ນອນນີ້ໂດຍການພັດທະນາລະບົບການກວດສອບ ດ້ານການເງິນ ຂອງຕົນເອງ ແລະ ມີການບັງຄັບໃຊ້ ເຊິ່ງເປັນການສະແດງໃຫ້ເຫັນເຖິງການລິເລີ່ມຂອງສະຖາບັນ ແລະ ເຫັນໄດ້ເຖິງຄວາມຄຸ້ມເຄີຍ ໃນ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ເພີ່ມຂຶ້ນ.



©FAO

# ທ່ານ ນາງ ແສງມາໄລພອນ ໂພທິສານ, ນ້ອງໃໝ່ໃນວຽກງານ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ

ເຖິງວ່າລາວໄດ້ເຮັດວຽກເປັນພະນັກງານກະສິກຳ ຢູ່ ພະແນກການລົງທຶນດ້ານກະສິກຳແຂວງວຽງຈັນເປັນເວລາ 7 ປີ ແລະ ໄດ້ເຮັດວຽກກ່ຽວກັບການລົງທຶນຢ່າງຫ້າວຫັນໃນແຕ່ລະມື້, ແຕ່ ທ່ານ ນາງ ແສງມາໄລພອນ ໂພທິສານ ເຄີຍໄດ້ຍິນເລື່ອງການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບພຽງໂດຍຫຍໍ້ ໃນສະໄໝ ທີ່ຮຽນຢູ່ມະຫາວິທະຍາໄລ. ນັບຕັ້ງແຕ່ໄດ້ເຂົ້າຮ່ວມ ໂຄງການການຮຽນຮູ້, ລາວເຫັນວ່າຄວາມຍືນຍົງດ້ານສິ່ງແວດລ້ອມ, ແລະ ວຽກງານໃນຂະບວນການລົງທຶນແມ່ນໄປຄຽງຄູ່ກັນ ແລະ ເຂົ້າໃຈລັກສະນະກ່ຽວຂ້ອງກັບບັນຫາທີ່ປິ່ນອ້ອມຂອງການ ລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ.

ທ່ານ ນາງ ແສງມາໄລພອນ ກ່າວວ່າ "ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບອາດຈະໃຊ້ໄດ້ກັບສິ່ງທີ່ພວກເຮົາກຳລັງເຮັດໃນປັດຈຸບັນ, ແຕ່ພວກເຮົາບໍ່ໄດ້ໃຊ້ຄຳວ່າການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ. ຄຳສັບທີ່ພວກເຮົາໃຊ້ແມ່ນ ການພັດທະນາແບບຍືນຍົງ,"

ສິ່ງນີ້ເຮັດໃຫ້ໝັ້ນໃຈວ່າໂຄງການການຮຽນຮູ້ແມ່ນການສ້າງຄວາມສາມາດຂອງພະນັກງານລັດເພື່ອເຂົ້າໃຈລັກສະນະແບບປະສົມປະສານຂອງຄວາມຍືນຍົງ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສິດທິມະນຸດໃນລະດັບການປະຕິບັດນະໂຍບາຍ.

ທ່ານ ນາງ ແສງມາໄລພອນ ໂພທິສານ ກ່າວວ່າ "ການຝຶກອົບຮົມໄດ້ຊ່ວຍໃຫ້ຂ້າພະເຈົ້າມີຄວາມເຂົ້າໃຈທີ່ດີຂຶ້ນ ກ່ຽວກັບການລົງທຶນດ້ານກະສິກຳ ແລະ ເປີດກວ້າງທັດສະນະຂອງຂ້າພະເຈົ້າ. ໃນປະຈຸບັນ,ຂ້າພະເຈົ້າຕ້ອງການຢາກເຫັນສະຖານະການແບບຊະນະ-ຊະນະ-ຊະນະ ທີ່ຫຼາຍຂຶ້ນ," ແລະ ຍັງໄດ້ກ່າວເຖິງການຊະນະແບບສາມຝ່າຍທີ່ ທ່ານ ສຸວັນທອງ ນາມວົງ ຈາກ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວເຖິງນຳ.



©FAO

## ການຝຶກອົບຮົມໂດຍອີງໃສ່ການແກ້ໄຂ

ທ່ານ ນາງ ແສງມາໄລພອນ ໂພທິສານ ໄດ້ເວົ້າວ່າ ການຊົດເຊີຍທີ່ດິນໃຫ້ແກ່ຊຸມຊົນ ໃນເວລາທີ່ດິນຂອງເຂົາເຈົ້າ ໄດ້ຖືກເວນຄືນ ເພື່ອ ຈຸດປະສົງການພັດທະນາຖືເປັນສິ່ງທ້າທາຍໃຫຍ່ທີ່ສຸດ ຂອງ ການລົງທຶນທີ່ດິນ ທີ່ລາວໄດ້ປະເຊີນ ໃນການເຮັດວຽກ ຂອງລາວ. “ມັນເກືອບເປັນເລື່ອງປົກກະຕິທີ່ປະຊາຊົນຈະບໍ່ພໍໃຈກັບອັດຕາຊົດເຊີຍທີ່ສະເໜີໄປ” ລາວໄດ້ກ່າວດ້ວຍຄວາມເປັນຫວ່ງ. “ບັນຫາດັ່ງກ່າວແມ່ນມີຄວາມຊັບຊ້ອນຫຼາຍ ແລະ ກ່ຽວຂ້ອງກັບຫຼາຍພາກສ່ວນ, ແຕ່ມັນກໍ່ມີຄວາມຈຳເປັນທີ່ຈະຕ້ອງຊອກຫາຂະບວນການທີ່ດີກວ່າ ເພື່ອຮັບປະກັນຜົນປະໂຫຍດທີ່ຍຸດຕິທຳ ໃຫ້ແກ່ກຸ່ມຜູ້ມີສ່ວນ ຮ່ວມຫຼັກທັງສາມກຸ່ມ.”

“ໂຄງການການຮຽນຮູ້ໄດ້ຊ່ວຍໃຫ້ຂ້າພະເຈົ້າຮັບຮູ້ເຖິງຄວາມສຳຄັນ ຂອງ ການກວດສອບວ່າ ຊາວກະສິກອນໄດ້ ຕົກລົງເຫັນດີກັບເລື່ອງຫຍັງແນ່. ບັນຫາມັກເກີດຂຶ້ນໃນເວລາທີ່ຊາວກະສິກອນ ແລະ ນັກລົງທຶນໄດ້ລົງນາມໃນຂໍ້ຕົກລົງ ໂດຍທີ່ບໍ່ເຂົ້າໃຈເນື້ອໃນຂອງຂໍ້ຕົກລົງຢ່າງລະອຽດ. ຊາວກະສິກອນຍັງມັກຈະບໍ່ເຂົ້າໃຈນະໂຍບາຍການພັດທະນາ ຂອງ ລັດຖະບານ ເຫດຜົນສ່ວນຫນຶ່ງແມ່ນມາຈາກການຂາດການສື່ສານຈາກລັດຖະບານໂດຍສະເພາະການປູກຈິດສຳນຶກໃຫ້ແກ່ຊາວກະສິກອນ ຄວນຖືເປັນບູລິມະສິດ.”

ຕອນນີ້ລາວເຫັນວ່າ ລັດຖະບານມີພາລະຄວາມຮັບຜິດຊອບສູງ ໃນການເຮັດໃຫ້ການລົງທຶນນຳມາ ເຊິ່ງ ວິທີການແບບຊະນະ-ຊະນະ-ຊະນະ ສຳລັບພາກລັດຖະບານ, ນັກລົງທຶນ, ແລະ ຊຸມຊົນ. ລາວກ່າວວ່າ “ລັດຖະບານແມ່ນຜູ້ໄກ່ເກ່ຍໃນຂະບວນການລົງທຶນ. ຄວາມເຂົ້າໃຈ ກ່ຽວກັບ ການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານ ແບບມີຄວາມຮັບຜິດຊອບ ແມ່ນ ບັນຫາສຳຄັນ ໂດຍສະເພາະໃນລະຫວ່າງການເຈລະຈາ”.

## ການປ່ຽນແປງພຽງເລັກນ້ອຍທີ່ເຮັດໃຫ້ເກີດມີຄວາມແຕກຕ່າງທີ່ໃຫຍ່ຫຼວງ

ຈາກໂຄງການການຮຽນຮູ້,ນາງ ແສງມາໄລພອນ ໂພທິສານ ໄດ້ນຳເອົາບົດຮຽນອັນໜຶ່ງມານຳໃຊ້ກັບວຽກງານຕົວຈິງຂອງລາວເຊິ່ງເປັນສິ່ງທີ່ສາມາດຈັດຕັ້ງປະຕິບັດໄດ້ທັນທີເພື່ອປັບປຸງຂອງວຽກງານໃນຄວາມຮັບຜິດຊອບຂອງຕົນ.ລາວສັງເກດເຫັນວ່າການນຳໃຊ້ການສົນທະນາກຸ່ມເພື່ອຊີ້ໃຫ້ເຫັນຂໍ້ຂັດແຍ່ງກ່ຽວກັບຄ່າຊົດເຊີຍແມ່ນມີປະສິດທິພາບ,ເຊິ່ງຜູ້ມາຮ້ອງທຸກສ່ວນຫຼາຍແມ່ນແມ່ຍິງ. ລາວຍັງກ່າວວ່າ“ແມ່ຍິງມັກຈະໄດ້ຮັບຜິດຊອບບັນຫາຄອບຄົວລວມທັງຄ່າໃຊ້ຈ່າຍໃນການປິ່ນປົວສຸຂະພາບແລະການສຶກສາ.” ການສົນທະນາແບບແບ່ງກຸ່ມຜູ້ຊາຍແລະກຸ່ມແມ່ຍິງຊ່ວຍເຮັດໃຫ້ແມ່ຍິງສາມາດສະແດງຄວາມກັງວົນຂອງພວກເຂົາໄດ້ຢ່າງເສລີກ່ຽວກັບການລົງທຶນທີ່ອາດມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ. ລາວກ່າວວ່າ“ນີ້ແມ່ນວິທີການທີ່ດີກວ່າໃນການຮັບຟັງຄຳຄິດເຫັນທີ່ແຕກຕ່າງກັນ.” ຂະບວນການນີ້ຊ່ວຍເສີມຂະຫຍາຍຄວາມພະຍາຍາມເພື່ອຫຼຸດຜ່ອນຜົນກະທົບຈາກການລົງທຶນໃນທາງລົບທີ່ອາດຂຶ້ນກັບຄົວເຮືອນ.

ບັນຫາການເຫັນດີຢ່າງອິດສະຫຼະແມ່ນເປັນສິ່ງທ້າທາຍອີກອັນໜຶ່ງທີ່ ນາງ ແສງມະໄລພອນ ໂພທິສານ ໄດ້ພົບພໍ້ໃນການເຮັດວຽກຂອງລາວຢູ່ເລື້ອຍໆ.ລາວກ່າວວ່າ“ເມື່ອລັດຖະບານຈັດສັນທີ່ດິນໃຫ້ແກ່ນັກລົງທຶນ,ຂ້າພະເຈົ້າເຫັນວ່າການຂໍຄວາມເຫັນດີຈາກປະຊາຊົນແມ່ນເປັນສິ່ງທີ່ທ້າທາຍ.ຂ້າພະເຈົ້າຄິດວ່າມັນແມ່ນແນວຄວາມຄິດທີ່ດີທີ່ເຮົາຄວນຂໍຄວາມເຫັນດີຈາກປະຊາຊົນ ແລະ ໃຫ້ພວກເຂົາມີສ່ວນຮ່ວມໃນຂະບວນການພັດທະນາທັງໝົດ.ເນື່ອງຈາກຈຸດປະສົງຫຼັກຂອງການພັດທະນາແມ່ນເພື່ອຊ່ວຍປະຊາຊົນ. ດັ່ງນັ້ນ, ລັດຖະບານ ແລະປະຊາຊົນຕ້ອງກ້າວໄປໃນທິດທາງດຽວກັນ”.

ລາວຮັບຮູ້ສິ່ງນີ້ເນື່ອງຈາກລາວໄດ້ຮຽນກ່ຽວກັບຫຼັກການເຫັນດີຢ່າງມີອິດສະຫຼະໂດຍໄດ້ຮັບຂໍ້ມູນລ່ວງໜ້າຢ່າງພຽງພໍ (FPIC). ນີ້ແມ່ນຂະບວນການມີສ່ວນຮ່ວມແບບແຕ່ລຸ່ມຂຶ້ນເທິງ ທີ່ຊ່ວຍໃຫ້ຊຸມຊົນໄດ້ເຂົ້າຮ່ວມ ໃນການສົນທະນາ ກ່ອນການເລີ່ມຕົ້ນໂຄງການ ເພື່ອເບິ່ງວ່າຈະເຫັນດີ ຫຼື ບໍ່ເຫັນດີ ໃຫ້ທາງໂຄງການດຳເນີນການ. ໃນຂະນະທີ່ວິທີການນີ້ອາດຈະບໍ່ແມ່ນວິທີການໃໝ່ ສຳລັບ ອົງການຈັດຕັ້ງທາງສັງຄົມ, ແຕ່ມັນແມ່ນວິທີການທີ່ຖືກນຳໃຊ້ຂ້ອນຂ້າງໜ້ອຍເກີນໄປໃນຂະບວນການຂອງລັດຖະບານ ອີງຕາມປະສົບການຂອງ ນາງ ແສງມະໄລພອນ ໂພທິສານ.

“ຂັ້ນຕອນການລົງທຶນລວມມີ: ການສຶກສາຄວາມເປັນໄປໄດ້ເຊິ່ງນັກລົງທຶນຕ້ອງເປັນຜູ້ດຳເນີນການ, ແລະ ລັດຖະບານເປັນຜູ້ທົບທວນຄືນ. ຖ້າຍອມຮັບໄດ້ ລັດຖະບານຈະນຳສະເໜີໂຄງການໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບໄດ້ຮັບຮູ້. ແຕ່ການສຶກສາຄວາມເປັນໄປໄດ້ຈະສາມາດເຮັດໄດ້ແນວໃດ,ຖ້າຊຸມຊົນບໍ່ເຫັນດີກັບທີ່ດິນທີ່ຖືກຈັດສັນໃນເບື້ອງຕົ້ນ?”

ວິທີການການເຫັນດີຢ່າງມີອິດສະຫຼະໂດຍໄດ້ຮັບຂໍ້ມູນລ່ວງໜ້າຢ່າງພຽງພໍແມ່ນປະຕິບັດແບບປີ້ນຄືນ: ການສຶກສາຄວາມເປັນໄປໄດ້ແມ່ນໄດ້ດຳເນີນການກັບພາກສ່ວນທີ່ໄດ້ຮັບຜົນກະທົບ.

ນັບຕັ້ງແຕ່ມີໂຄງການການຮຽນຮູ້ ທ່ານ ນາງ ແສງມາໄລພອນ ໂພທິສານ ເຫັນວ່າ ວິທີການຕ່າງໆເຊັ່ນ: ການສົນທະນາກຸ່ມ ແລະ ການເຫັນດີຢ່າງມີອິດສະຫຼະ ໂດຍໄດ້ຮັບຂໍ້ມູນລ່ວງໜ້າຢ່າງພຽງພໍ ສາມາດນຳໃຊ້ ເພື່ອ ບັນລຸ 3 ໄຊຊະນະດັ່ງນີ້: “ຖ້າປະຊາຊົນບໍ່ເຫັນດີໃຫ້ມີການລົງທຶນ ມັນແມ່ນໜ້າທີ່ຂອງ ພັກ ແລະ ລັດຖະບານ ທີ່ຈະຕ້ອງໄດ້ຊຸກຍູ້ປະຊາຊົນ ບໍ່ຈຳເປັນຕ້ອງບັງຄັບພວກເຂົາແຕ່ຕ້ອງເຮັດວຽກຮ່ວມກັບພວກເຂົາ.”ການປ່ຽນແປງແມ່ນຂັ້ນຕອນທີ່ເປັນໄປແບບເທື່ອລະຂັ້ນ ແລະ ຕ້ອງມີເຄື່ອງມື ແລະ ຄວາມຮູ້ທີ່ຖືກຕ້ອງ, ມັນເຫັນໄດ້ຊັດເຈນວ່າທຸກໆຂັ້ນຕອນແມ່ນເຂົ້າມາໃກ້ກັບການປະຕິບັດການລົງທຶນແບບມີຄວາມຮັບຜິດຊອບຫຼາຍຂຶ້ນ.ເພື່ອໃຫ້ມີ

ການນຳໃຊ້ແນວທາງການການເຫັນດີຢ່າງມີອິດສະຫຼະໂດຍໄດ້ຮັບຂໍ້ມູນລ່ວງໜ້າຢ່າງພຽງພໍຕື່ມອີກ, ພາກສ່ວນກ່ຽວຂ້ອງຈຳເປັນຕ້ອງມີຄວາມໂປ່ງໃສໃນຂະບວນການການລົງທຶນ, ໂດຍສະເພາະຂັ້ນຕອນການຍື່ນສະເໜີ. ຫົວຂໍ້ນີ້ຍັງໄດ້ຖືກນຳສະເໜີໃນການປຶກສາຫາ ລືຫຼາຍຝ່າຍແຫ່ງຊາດ ໃນປີ2021.

## ຄວາມຄາດຫວັງ ເພື່ອສືບຕໍ່ການຮຽນຮູ້

ທ່ານນາງ ແສງມະໄລພອນ ໂພທິສານ ເຫັນວ່າການພັດທະນາໄປໃນທິດທາງທີ່ດີແມ່ນກຳລັງເກີດຂຶ້ນຍ້ອນມີການຮ່ວມມືລະຫວ່າງພາກລັດຖະບານ, ຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ຊຸມຊົນ. ແຕ່ລາວກໍ່ໄດ້ກ່າວວ່າ: "ຫຼັກສູດນັ້ນສັ້ນເກີນໄປ.ພວກເຮົາຕ້ອງການການຝຶກອົບຮົມເພີ່ມເຕີມ. ນອກນັ້ນ,ຫົວໜ້າຂອງຂ້າພະເຈົ້າຍັງສະແດງຄວາມສົນໃຈທີ່ຈະເຂົ້າຮ່ວມຫຼັງຈາກຂ້າພະເຈົ້າແຈ້ງໃຫ້ເພິ່ນໄດ້ຮັບຮູ້ ກ່ຽວກັບຫົວຂໍ້ນີ້. ຂ້າພະເຈົ້າຕ້ອງການຮຽນຮູ້ເພີ່ມເຕີມ ແລະ ຂ້າພະເຈົ້າຄິດວ່າເພື່ອນຮ່ວມງານຈາກຫ້ອງການຂອງຂ້າພະເຈົ້າຄວນຮັບຮູ້ ແລະ ຮຽນຮູ້ເພີ່ມເຕີມກ່ຽວກັບການລົງທຶນໃນຂະ ແໜງກະສິກຳ ແລະ ລະບົບສະບຽງອາຫານແບບມີຄວາມຮັບຜິດຊອບ ເຊັ່ນກັນ."

ທັດສະນະຂອງ ທ່ານ ນາງ ແສງມະໄລພອນ ໂພທິສານ ກ່ຽວກັບການພັດທະນາຂົງເຂດການລົງທຶນກະສິກຳ ໃນ ສປປ ລາວ ແມ່ນເປັນໄປໃນທາງບວກ. ລາວກ່າວວ່າ, "ສະພາບການພັດທະນາດ້ານນະໂຍບາຍກຳລັງເປັນໄປດ້ວຍດີ ແລະ ຄ່ອຍໆມີການແກ້ໄຂໃນແຕ່ລະບັນຫາ. ຄວາມອາດສາມາດຂອງພະນັກງານລັດຖະກອນ ແມ່ນກຳລັງໄດ້ຮັບການປັບປຸງ ໂດຍຜ່ານການຝຶກອົບຮົມ, ກອງປະຊຸມວິຊາການ ແລະ ການທັດສະນະສຶກສາເຊິ່ງແມ່ນການປັບປຸງໃນກົນໄກການບໍລິຫານ.ຄຽງຄູ່ກັບປະສົບການຕົວຈິງອັນນີ້ຊ່ວຍໃຫ້ພວກເຂົາສາມາດນຳເອົາກົດລະບຽບມານຳໃຊ້ໃນວຽກງານຕົວຈິງຢ່າງເຂັ້ມງວດ ຂຶ້ນກ່ວາເກົ່າ".

ຄຳເຫັນດັ່ງກ່າວແມ່ນຖືກສະທ້ອນໃຫ້ເຫັນໂດຍຜ່ານທັດສະນະຂອງ ທ່ານ ສຸວັນທອງ ນາມວົງ ເຊັ່ນກັນ, ເຊິ່ງທ່ານ ໄດ້ສະຫຼຸບວ່າ:"ຖ້າຂ້າພະເຈົ້າສາມາດເຮັດໄດ້ຂ້າພະເຈົ້າຈະສະເໜີໃຫ້ມີການສົນທະນາຫຼາຍດ້ານ ກ່ຽວກັບການລົງທຶນໃນຂະແໜງກະສິກຳ ແລະ ລະບົບສະບຽງອາຫານແບບມີຄວາມຮັບຜິດຊອບ, ທີ່ດິນ ແລະ ປ່າໄມ້ ໃຫ້ຫຼາຍຂຶ້ນ. ເພາະວ່າ ສິ່ງເຫຼົ່ານັ້ນມີຄວາມຈຳເປັນໃນທຸກລະດັບ."




©FAO

# ເອກະສານອ້າງອີງ

**ASEAN Technical Working Group on Agriculture and Research Development.** 2018. *The ASEAN Guidelines on Promoting Responsible Investment in Food, Agriculture and Forestry.* Hanoi, ASEAN.
www.aseanraiguidelines.org/_files/ugd/782512_33e857b214ac4d26bef76473acb2e959.pdf

**Committee on World Food Security.** 2014. *Principles for Responsible Investment in Agriculture and Food Systems.* Rome, FAO.

**FAO, IFAD (International Fund for Agricultural Development) and WFP (World Food Programme).** 2015. *Achieving Zero Hunger: the critical role of investments in social protection and agriculture.* Rome, FAO.

**Hett, C., Nanhthavong, V., Hanephom, S., Phommachanh, A., Sidavong, B., Phouangphet, K., Lu, J., Shattuck, A., Ingalls, M., Bernhard, R., Phathitmixay, S., Phomphakdy, C., Heinimann, A. & Epprecht, M.** 2020. *Land Leases and Concessions in the Lao People's Democratic Republic: A characterization of investments in land and their impacts.* Bern, Switzerland, Centre for Development and Environment (CDE), University of Bern, with Bern Open Publishing.

**ILO (International Labour Organization).** 2022. Employment by sex and economic activity – ILO modelled estimates, November 2019. In: *ILOSTAT explorer.* Geneva. Cited 5 May 2022.
www.ilo.org/shinyapps/bulkexplorer40/?lang=en&segment=indicator&id=EMP_2EMP_SEX_ECO_NB_A

**Lao People's Democratic Republic.** *The Instruction On Investment Approval and Land Management Mechanism For Leasing or Concession to Cultivate Crops,* 2019.

**World Bank.** 2022. Agriculture, forestry, and fishing, value added (% of GDP). In: *World Bank Open Data.* Washington, DC. Cited 5 May 2022.
https://data.worldbank.org/indicator/NV.AGR.TOTL.ZS

ໂດຍການສະໜັບສະໜູນດ້ານການເງິນຈາກ

Federal Ministry
of Food
and Agriculture

Partnerships and UN Collaboration Division – Responsible Agricultural
Investments, Learning, and Scientific Information Unit
Responsible-investment@fao.org
https://www.fao.org/in-action/responsible-agricultural-investments/en/
@FAOInvest

Food and Agriculture Organization of the United Nations
Rome, Italy

CC BY NC SA

© FAO, 2022, Last updated 05/09/2022
CC0214LO/1/10.22
Cover photo: ©FAO